ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ......0 0 8 7 0 3...... /ຕປທ
ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2017

**ຮຽນ :** ບັນດາທ່ານລັດຖະມົນຕີ, ຮອງລັດຖະມົນຕີ, ບັນດາທ່ານທີ່ຖືກແຕ່ງຕັ້ງເຂົ້າໃນຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ຢູ່ ສປປ ລາວ.

**ເລື່ອງ:** ການແບ່ງຄວາມຮັບຜິດຊອບໃນການຈັດຕັ້ງຕິບັດເປົ້າໝາຍການພັດທະນາແບບຍືນຍົງ (ປພຍ) ໃຫ້ແກ່ແຕ່ລະກະຊວງ, ຂະແໜງການ ກ່ຽວຂ້ອງ.

- ອີງຕາມລັດຖະດຳລັດຂອງປະທານປະເທດ ວ່າດ້ວຍການແຕ່ງຕັ້ງ ຄະນະຊີ້ນຳລະດັບຊາດ ເພື່ອຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (ປພຍ ຫຼື SDG) ຢູ່ ສປປ ລາວ, ສະບັບເລກທີ 206/ປປທ, ລົງວັນທີ 20 ກັນຍາ 2017

ກະຊວງການຕ່າງເທດ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການຈັດແບ່ງຄວາມຮັບຜິດຊອບໃນການ ການຈັດຕັ້ງປະຕິບັດ ປພຍ ໃຫ້ແຕ່ລະກະຊວງທີ່ກ່ຽວຂ້ອງ, ຄືດັ່ງຕໍ່ໄປນີ້:

**ເປົ້າໝາຍ 1: ລຶບລ້າງຄວາມທຸກຍາກທຸກຮູບແບບໃນທົ່ວໂລກ** - ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຫຼັກ ຮ່ວມກັນກັບ ກະຊວງສາທາລະນະສຸກ.

**ເປົ້າໝາຍ 2: ລຶບລ້າງຄວາມອຶດຫິວ, ຮັບປະກັນໃຫ້ບັນລຸການຄໍ້າປະກັນສະບຽງອາຫານ, ປັບປຸງດ້ານ ໂພຊະນາການ ແລະ ສົ່ງເສີມກະສິກຳແບບຍືນຍົງ** - ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຫຼັກ ຮ່ວມກັນກັບ ກະຊວງສາທາລະນະສຸກ.

**ເປົ້າໝາຍ 3: ຮັບປະກັນໃຫ້ທຸກຄົນໃນທຸກເພດໄວມີສຸຂະພາບທີ່ດີ ແລະ ສົ່ງເສີມໃຫ້ທຸກຄົນມີຊີວິດການເປັນຢູ່ທີ່ດີ** - ມອບໃຫ້ ກະຊວງສາທາລະນະສຸກ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 4: ຮັບປະກັນໃຫ້ທຸກຄົນໄດ້ຮັບການສຶກສາທີ່ມີຄຸນນະພາບ ເທົ່າທຽມກັນ ແລະ ທົ່ວເຖິງ ແລະ ສົ່ງເສີມກາລະໂອກາດໃນການຮຽນຮູ້ຕະຫລອດຊີວິດສຳລັບໝົດທຸກຄົນ** - ມອບໃຫ້ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 5: ຮັບປະກັນໃຫ້ບັນລຸຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ ແມ່ຍິງ ແລະ ເດັກຍິງທຸກຄົນ** - ມອບໃຫ້ ສູນກາງສະຫະພັນແມ່ຍິງລາວ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 6: ຮັບປະກັນໃຫ້ທຸກຄົນມີນໍ້າໃຊ້ ແລະ ມີການຄຸ້ມຄອງນໍ້າແບບຍືນຍົງ ແລະ ສຸຂະອະນາໄມສຳລັບໝົດທຸກຄົນ** - ມອບໃຫ້ ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 7: ຮັບປະກັນການເຂົ້າເຖິງພະລັງງານທີ່ທັນສະ ໄໝ, ຍືນຍົງ, ເຊື່ອຖືໄດ້ ແລະ ລາຄາບໍ່ແພງສໍາລັບໝົດທຸກຄົນ** - ມອບໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 8: ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດທີ່ຕໍ່ເນື່ອງ, ສົມດູນ ແລະ ຍືນຍົງ, ການມີວຽກເຮັດງານທໍາທີ່ມີປະສິດທິຜົນ ແລະ ເຕັມສ່ວນ ແລະ ມີອາຊີບທີ່ດີສໍາລັບ ໝົດທຸກຄົນ** - ມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 9: ສ້າງພື້ນຖານໂຄງລ່າງທີ່ໝັ້ນຄົງທົນທານ, ສົ່ງເສີມການຫັນເປັນອຸດສາຫະກໍາແບບຍືນຍົງ ແລະ ທົ່ວເຖິງ ແລະ ສົ່ງເສີມການປະດິດສ້າງ** - ມອບໃຫ້ ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 10: ຫຼຸດຜ່ອນຄວາມບໍ່ສະເໝີພາບຢູ່ພາຍໃນປະເທດ ແລະ ລະຫວ່າງປະເທດ** - ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດ) ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 11: ສ້າງຕົວເມືອງ ແລະ ທີ່ພັກອາໄສຂອງປະຊາຊົນໃຫ້ທົ່ວເຖິງ, ປອດໄພ, ໝັ້ນຄົງທົນທານ ແລະ ຍືນຍົງ** - ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 12: ຮັບປະກັນຮູບແບບການບໍລິໂພກ ແລະ ການຜະລິດໃຫ້ມີຄວາມຍືນຍົງ** - ມອບໃຫ້ ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 13: ຮີບຮ້ອນວາງມາດຕະການເພື່ອແກ້ໄຂກັບການປ່ຽນແປງດິນຟ້າອາກາດ ແລະ ຮັບມືຜົນກະທົບຈາກບັນຫາດັ່ງກ່າວ** - ມອບໃຫ້ ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 14: ອະນຸລັກ ແລະ ຊົມໃຊ້ມະຫາສະໝຸດ, ທະເລ ແລະ ຊັບພະຍາກອນທາງທະເລຢ່າງຍືນຍົງເພື່ອການພັດທະນາແບບຍືນຍົງ** - ມອບໃຫ້ ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 15: ປົກປ້ອງ, ຟື້ນຟູ ແລະ ສົ່ງເສີມການນໍາໃຊ້ລະບົບນິເວດແບບຍືນຍົງ, ຄຸ້ມຄອງປ່າໄມ້ແບບຍືນຍົງ, ຕ້ານທຸກໄພແຫ້ງແລ້ງ, ຢຸດຕິ ແລະ ຟື້ນຟູການເສື່ອມໂຊມຂອງດິນ ແລະ ຢຸດຕິການສູນເສຍ ຊີວະນາໆພັນ** - ມອບໃຫ້ ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍ 16: ສົ່ງເສີມໃຫ້ສັງຄົມມີຄວາມສະຫງົບສຸກ ແລະ ທົ່ວເຖິງເພື່ອການພັດທະນາທີ່ຍືນຍົງ, ໃຫ້ທຸກຄົນສາມາດເຂົ້າເຖິງຄວາມຍຸຕິທໍາ ແລະ ສ້າງສະຖາບັນຕ່າງໆ ໃຫ້ມີຄວາມເຂັ້ມແຂງ, ມີປະສິດທິພາບສູງ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ ຢ່າງທົ່ວເຖິງໃນທຸກລະດັບ** - ມອບໃຫ້ ກະຊວງພາຍໃນເປັນຜູ້ຮັບຜິດຊອບຫຼັກ.

**ເປົ້າໝາຍທີ 17: ສ້າງຄວາມເຂັ້ມແຂງໃຫ້ແກ່ການຈັດຕັ້ງປະຕິບັດ ແລະ ຟື້ນຟູການເປັນຄູ່ຮ່ວມສາກົນ ເພື່ອການພັດທະນາແບບຍືນຍົງ** - ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຮັບຜິດຊອບຫຼັກຮ່ວມກັບກັບ ກະຊວງການຕ່າງປະເທດ.

**ເປົ້າໝາຍ 18: ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ, ກໍາຈັດອຸປະສັກຂອງລະເບີດບໍ່ທັນແຕກ ເພື່ອການພັດທະນາແຫ່ງຊາດ** - ມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຜູ້ຮັບຜິດຊອບຫຼັກ ຮ່ວມກັບກັບ ກະຊວງການຕ່າງປະເທດ.

ກະຊວງຮັບຜິດຊອບຫຼັກທັງໝົດ 14 ກຸ່ມ ຄື:

| ກຸ່ມກະຊວງ | | ເປົ້າໝາຍ ປພຍ |
|---|---|---|
| 1. | ກະຊວງກະສິກຳ ແລະ ປ່າໄມ້<br>**ສຳລັບເປົ້າໝາຍ 1 ແລະ 2 ແມ່ນຮັບຜິດຊອບຮ່ວມກັນກັບ ກະຊວງສາທາລະນະສຸກ* | ເປົ້າໝາຍ 1, 2, 14, 15 |
| 2. | ກະຊວງສາທາລະນະສຸກ | ເປົ້າໝາຍ 3 |
| 3. | ກະຊວງສຶກສາທິການ ແລະ ກິລາ | ເປົ້າໝາຍ 4 |
| 4. | ສູນກາງສະຫະພັນແມ່ຍິງລາວ | ເປົ້າໝາຍ 5 |
| 5. | ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ | ເປົ້າໝາຍ 6 |
| 6. | ກະຊວງພະລັງງານ ແລະ ບໍ່ແຮ່ | ເປົ້າໝາຍ 7 |
| 7. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ | ເປົ້າໝາຍ 8 |
| 8. | ກະຊວງອຸດສາຫະກຳ ແລະ ການຄ້າ | ເປົ້າໝາຍ 9 |
| 9. | ກະຊວງແຜນການ ແລະ ການລົງທຶນ (ສູນສະຖິຕິແຫ່ງຊາດ) | ເປົ້າໝາຍ 10 |
| 10. | ກະຊວງໂຍທາທິການ ແລະ ຂົນສົ່ງ | ເປົ້າໝາຍ 11 |
| 11. | ກະຊວງຊັບພະຍາກອນ ແລະ ສິ່ງແວດລ້ອມ | ເປົ້າໝາຍ 12, 13 |
| 12. | ກະຊວງພາຍໃນ | ເປົ້າໝາຍ 16 |
| 13. | ກະຊວງແຜນການ ແລະ ການລົງທຶນ<br>**ຮ່ວມກັນກັບ ກະຊວງການຕ່າງປະເທດ* | ເປົ້າໝາຍທີ 17 |
| 14. | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ<br>**ຮ່ວມກັນກັບ ກະຊວງການຕ່າງປະເທດ* | ເປົ້າໝາຍ 18 |

ມອບໃຫ້ກະຊວງ, ຂະແໜງການທີ່ກ່ຽວຂ້ອງຈັດຕັ້ງປະຕິບັດ ບັນດາເປົ້າໝາຍດັ່ງກ່າວ ແລະ ເຊື່ອມສານເຂົ້າໃນແຜນພັດທະນາ ເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະຕາມຄວາມເໝາະສົມ. ພ້ອມນີ້, ກໍ່ສະເໜີໃຫ້ແຕ່ລະກະຊວງທີ່ກ່າວມາຂ້າງເທິງ ແຕ່ງຕັ້ງພະນັກງານຂັ້ນ ຮອງກົມ ແລະ ຂັ້ນພະແນກ ເພື່ອເຂົ້າຮ່ວມໃນການຕິດຕາມ ແລະ ກຽມລາຍງານໄປແຕ່ລະໄລຍະ.

ດັ່ງນັ້ນ, ຈິ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ ແລະ ພິຈາລະນາຕາມທາງຄວນດ້ວຍ.

**ລັດຖະມົນຕີ**

**ຮອງປະທານ ແລະ ຜູ້ປະຈຳການ ຄະນະຊີ້ນຳລະດັບຊາດ**

**ເພື່ອຈັດຕັ້ງປະຕິບັດ ປພຍ**

ກະຊວງການຕ່າງປະເທດ ລັດຖະມົນຕີ

**ສະເຫລີມໄຊ ກົມມະສິດ**